Washington State Department of Social & Health Services
Transforming lives

TANF/SFA ສໍາລັບເດັກນ້ອຍທີ່ອາໄສຢູ່ກັບຜູ້ໃຫຍ່ທີ່ບໍ່ມີສາຍສໍາພັນ

ຖະແຫຼງການກ່ຽວກັບການດໍາເນີນການຂອງຜູ້ໃຫຍ່ແທນທີ່ພໍ່ແມ່ (ໃນນາມເປັນພໍ່ແມ່)

ຜູ້ດູແລ: ຕື່ມຂໍ້ມູນໃສ່ໃນແບບຟອມນີ້ ຖ້າທ່ານກໍາລັງເບິ່ງແຍງດູແລເດັກທີ່ຂັດສົນທີ່ທ່ານບໍ່ມີສາຍສາພັນ ແລະ ທ່ານບໍ່ມີສິດໃນການຄຸ້ມຄອງ ຫຼື ເປັນຜູ້ປົກຄອງເດັກຕາມຄໍາສັ່ງຂອງສານ.

ພາກທີ 1. ຂໍ້ມູນໜ່ວຍງານ (ຕື່ມຂໍ້ມູນໃສ່ໂດຍພະນັກງານຂອງໜ່ວຍງານເທົ່ານັ້ນ)

1. COMMUNITY SERVICES OFFICE (ຫ້ອງການບໍລິການຊຸມຊົນ, CSO)	2. ຊື່ຜູ້ຈັດການກໍລະນີ	3. ໝາຍເລກ ID ລູກຄ້າຂອງຜູ້ໃຫຍ່ທີ່ບໍ່ມີສາຍສໍາພັນ

ພາກທີ 2. ຂໍ້ມູນກ່ຽວກັບຜູ້ໃຫຍ່ທີ່ກໍາລັງເບິ່ງແຍງດູແລເດັກ (ກະລຸນາພິມຢ່າງຈະແຈ້ງ)

4. ນາມສະກຸນ	5. ຊື່ແທ້	6. ຊື່ກາງ	7. ເບີໂທ (ພ້ອມດ້ວຍລະຫັດພື້ນທີ່) ( )
8. ທີ່ຢູ່ປັດຈຸບັນ (ຖະໜົນ, ເມືອງ ແລະ ລະຫັດໄປສະນີ)		9. ທີ່ຢູ່ທີ່ຜ່ານມາ (ຖະໜົນ, ເມືອງ ແລະ ລະຫັດໄປສະນີ)	

ພາກທີ 3. ຂໍ້ມູນກ່ຽວກັບພໍ່ແມ່ຂອງເດັກ (ກະລຸນາພິມຢ່າງຈະແຈ້ງ)

10. ຊື່ແມ່ຂອງເດັກ	11. ເບີໂທລະສັບຂອງແມ່ ( )	12. ທີ່ຢູ່ປັດຈຸບັນ ຫຼື ທີ່ຢູ່ສຸດທ້າຍຫຼ້າສຸດທີ່ຊາບຂອງແມ່
13. ຊື່ພໍ່ຂອງເດັກ	14. ເບີໂທລະສັບຂອງພໍ່ ( )	15. ທີ່ຢູ່ປັດຈຸບັນ ຫຼື ທີ່ຢູ່ສຸດທ້າຍຫຼ້າສຸດທີ່ຊາບຂອງພໍ່

ພາກທີ 4. ຂໍ້ມູນກ່ຽວກັບຄວາມສາພັນຂອງທ່ານກັບເດັກ (ກະລຸນາພິມຢ່າງຈະແຈ້ງ)

16. ທ່ານໄດ້ຮັບການອະນຸຍາດຈາກພໍ່ແມ່ຂອງເດັກໃນການເບິ່ງແຍງດູແລເດັກຄົນນີ້ບໍ? ☐ ແມ່ນ ☐ ບໍ່ ຖ້າແມ່ນ, ເປັນລາຍລັກອັກສອນບໍ? ☐ ແມ່ນ ☐ ບໍ່

17. ອະທິບາຍວ່າເດັກມາອາໄສຢູ່ກັບທ່ານໄດ້ແນວໃດ

18. ທ່ານຄາດວ່າເດັກຈະຢູ່ນໍາທ່ານດົນປານໃດ? _____

19. ທ່ານກໍາລັງວາງແຜນທີ່ຈະຂໍການຄຸ້ມຄອງ ຫຼື ການເປັນຜູ້ປົກຄອງເດັກຕາມຄໍາສັ່ງຂອງສານບໍ? ☐ ແມ່ນ ☐ ບໍ່

ພາກທີ 5. ຂໍ້ມູນກ່ຽວກັບການເບິ່ງແຍງດູແລ ແລະ ການຄອບຄຸມເດັກ

"ແທນທີ່ພໍ່ແມ່" ໝາຍຄວາມວ່າ ແທນບ່ອນຂອງພໍ່ແມ່ ຫຼື ແທນທີ່ຂອງພໍ່ແມ່. ເພື່ອໃຫ້ພະແນກສາມາດຕັດສິນໃຈໄດ້ວ່າທ່ານກໍາລັງດໍາເນີນການແທນທີ່ພໍ່ແມ່, ທ່ານຕ້ອງໄດ້ຕັ້ງໃຈປະຕິບັດໜ້າທີ່ຂອງພໍ່ແມ່.

ພວກເຮົາພິຈາລະນາວ່າທ່ານເປັນຜູ້ດໍາເນີນການແທນທີ່ພໍ່ແມ່ ໃນເມື່ອ:

- ພໍ່ແມ່ຂອງເດັກບໍ່ຢູ່.
- ທ່ານບໍ່ແມ່ນຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງຕາມກົດໝາຍຂອງເດັກ ແລະ
- ທ່ານໄດ້ດໍາເນີນການດູແລ ແລະ ການຄອບຄຸມເດັກປະຈໍາໃນແຕ່ລະວັນ.

ຂ້າງລຸ່ມນີ້ແມ່ນຕົວຢ່າງຂອງໜ້າທີ່ທີ່ຜູ້ໃຫຍ່ທີ່ດໍາເນີນການແທນທີ່ພໍ່ແມ່ຈະຕ້ອງໄດ້ເຮັດ. ການລົງລາຍເຊັນໃສ່ແບບຟອມນີ້, ສະແດງວ່າທ່ານກໍາລັງລະບຸວ່າ ທ່ານເປັນຜູ້ປະຕິບັດໜ້າທີ່ໃນການເບິ່ງແຍງດູແລ ແລະ ການຄອບຄຸມເດັກເປັນປະຈໍາໃນແຕ່ລະວັນ ແລະ ດໍາເນີນການແທນທີ່ພໍ່ແມ່.

- ໃຫ້ basic food (ອາຫານພື້ນຖານ), ທີ່ພັກອາໄສ ແລະ ເຄື່ອງນຸ່ງຫົ່ມໃຫ້ແກ່ເດັກ.
- ປຸກໃຫ້ເດັກລຸກຂຶ້ນ ແລະ ກຽມພ້ອມໃນຕອນເຊົ້າ.
- ເຮັດໃຫ້ແນ່ໃຈວ່າເດັກໄດ້ໄປໂຮງຮຽນ ຫຼື ໂຮງລ້ຽງເດັກ.
- ຊ່ວຍອາບນ້ໍາ ແລະ ນຸ່ງເຄື່ອງໃຫ້ເດັກ.
- ກະກຽມອາຫານໃຫ້ເດັກ.
- ເຂົ້າຮ່ວມກອງປະຊຸມພໍ່ແມ່/ຄູອາຈານ.
- ພາເດັກໄປພົບແພດ ຫຼື ທັນຕະແພດຕາມປົກກະຕິ.
- ເຮັດໜ້າທີ່ເປັນຜູ້ຕິດຕໍ່ສຸກເສີນຢູ່ໂຮງຮຽນ.
- ລົງທະບຽນ ແລະ ພາເດັກໄປເຮັດກິດຈະກໍານອກຫຼັກສູດຕ່າງໆ.
- ໃຫ້ຄໍາແນະນໍາ ແລະ ລົງລະບຽບວິໄນແກ່ເດັກ.

ການລົງລາຍເຊັນໃນແບບຟອມນີ້, ສະແດງວ່າຂ້າພະເຈົ້າລະບຸວ່າ ຂ້າພະເຈົ້າເປັນຜູ້ໃຫ້ການເບິ່ງແຍງດູແລ ແລະ ຄໍາແນະນໍາໂດຍຄໍານຶງເຖິງຜົນປະໂຫຍດທີ່ດີທີ່ສຸດຂອງເດັກ. ຂ້າພະເຈົ້າເຂົ້າໃຈວ່າ ພະແນກຈະດໍາເນີນການກວດສອບປະຫວັດຄວາມເປັນມາພາກັບກັບສະມາຊິກໃນຄົວເຮືອນທັງໝົດທຸກຄົນທີ່ມີອາຍຸ 18 ປີຂຶ້ນໄປ. ຂ້າພະເຈົ້າເຂົ້າໃຈວ່າ ຂ້າພະເຈົ້າບໍ່ສາມາດຮັບເງິນຊ່ວຍເຫຼືອໄດ້ຖ້າເດັກບໍ່ອາໄສຢູ່ນໍາຕົນ. ຂ້າພະເຈົ້າເຂົ້າໃຈວ່າ ຖ້າຜົນຂອງການກວດສອບປະຫວັດຄວາມເປັນມາ ມີຄວາມໜ້າກັງວົນກ່ຽວກັບສຸຂະພາບ, ຄວາມປອດໄພ ຫຼື ສະຫວັດດີການຂອງເດັກ, ພະແນກຈະດໍາເນີນການປະເມີນແບບສະໝັກໃຈ ຫຼື ການໄປຢ້ຽມຢາມເຖິງບ້ານ ແລະ ຖ້າຈໍາເປັນ, ຈະດໍາເນີນການນໍາສິ່ງໄປຫາ Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ, DCYF). ຂ້າພະເຈົ້າເຂົ້າໃຈວ່າ ຖ້າຂ້າພະເຈົ້າໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຢູ່ໃນແບບຟອມນີ້ໂດຍເຈດຕະນາ, ກົດໝາຍຂອງລັດ Washington ຈະຖືວ່າມີຄວາມຜິດໃນສະຖານການຕິວະຍິວະຫຼອກລວງ ແລະ ອາດສົ່ງຜົນໃຫ້ຖືກດໍາເນີນຄະດີຕໍ່ໄປ. ການລົງລາຍເຊັນໃສ່ແບບຟອມສະບັບນີ້, ສະແດງວ່າຂໍ້ມູນທີ່ລະບຸໄວ້ແມ່ນມີຄວາມຈິງ ແລະ ຖືກຕ້ອງແລ້ວ.

ລາຍເຊັນຂອງຜູ້ໃຫຍ່ທີ່ດໍາເນີນການແທນທີ່ພໍ່ແມ່	ວັນທີ